Nam Theun 1 Power Co., Ltd (NT1PC)
Sithong Road, Pakthang Village, Sikhotabong District, Vientiane Capital
Tel: (856)021 550497, Fax: (856) 021 550498,
E-mail: Info@nt1pc.com

# Term of Reference

## ບໍລິການການຮັກສາຄວາມປອດໄພ

ບໍລິສັດໄຟຟ້ານໍ້າເທີນ 1 ຈຳກັດ (NT1PC) ເປັນການຮ່ວມທຶນໂດຍ ກຸ່ມບໍລິສັດພອນສັກ, ບໍລິສັດເອັກໂກ້ (ປະເທດໄທ) ແລະ ບໍລິສັດ ອີດີແອວ ເຈັນ (ປະເທດລາວ). ເພື່ອພັດທະນາເຂື່ອນໄຟຟ້າຂະໜາດ 650 MW ເຊິ່ງຕັ້ງຢູ່ ບ້ານໂພນຈະເລີນ, ເມືອງປາກກະດິງ, ແຂວງບໍລິຄຳໄຊ. ໂຄງການດັ່ງກ່າວໄດ້ຮັບການສຳປະທານໄລຍະຍາວໂດຍ ລັດຖະບານແຫ່ງ ສປປ ລາວ ແລະ ໄດ້ດຳເນີນງານການຜະລິດໄຟຟ້າໃນປີ 2022.

### I. ພື້ນທີ່ໃຫ້ບໍລິການວຽກງານຮັກສາຄວາມປອດໄພ

1. ແຄ້ມທີ່ພັກຂອງພະນັກງານບໍລິສັດໄຟຟ້ານໍ້າເທີນ1 ໃຊ້ຈຳນວນຄົນ: **6 ຄົນ.** ໃນພື້ນທີ່ທັງໝົດ 22 ແຮັກຕ້າ ປະກອບມີອາຄານ ແລະ ສິ່ງປຸກສ້າງດັ່ງລຸ່ມນີ້;
   - ອາຄານຫ້ອງການ ຈຳນວນ 3 ຫຼັງ.
   - ເຮືອນພັກສຳລັບຜູ້ບໍລິຫານລະດັບສູງ, ວິຊາການ ແລະ ພະນັກງານທົ່ວໄປ ຈຳນວນ 35 ຫຼັງ.
   - ສາງເກັບເຄື່ອງ 1 ຫຼັງ.
   - ຮ້ານອາຫານ ແລະ ຫ້ອງອາຫານ 2 ຫຼັງ.
   - ຄັບບຮາວສ ຊີງລາວ 1 ຫຼັງ.
   - ພາວິນລ້ຽນ 1 ຫຼັງ,
   - ສະໜາມກິລາ ແລະ ສິ່ງອຳນວຍຄວາມສະດວກອື່ນໆ.

2. ຈຸດກວດຫຼັກທາງເຂົ້າ - ອອກໂຄງການ (ໄມ້ກັ້ນທີ 1). ໃຊ້ຈຳນວນຄົນ: **7 ຄົນ** ລວມທັງຜູ້ປະສານງານ 1ຄົນ.
3. ຈຸດໂຮງໄຟຟ້າ (Power house) ໃຊ້ຈຳນວນຄົນ: **6 ຄົນ.**
4. Main Dam & Power Intake ໃຊ້ຈຳນວນຄົນ: **6 ຄົນ.**
5. ຈຸດສະຖານີ ໄຟຟ້າໃນ (Common Switch Yard) ໃຊ້ຈຳນວນຄົນ: **3 ຄົນ**
6. ຈຸດສະຖານີ ໄຟຟ້ານອກ (Connection Switch Yards.) ໃຊ້ຈຳນວນຄົນ: **3 ຄົນ**
7. ສາງເຄື່ອງເຂດນອກຂອງນ້ຳເທີນ1 ຈຸດຖິ້ມຂີ້ເຫຍື້ອ ຂອງໂຄງການ ໃຊ້ຈຳນວນຄົນ: **5 ຄົນ**
8. ແຄມທີ່ພັກອາໃສວິຊາການ ແລະ ແຂກຂອງແອນດິດເກົ່າ, ໃຊ້ຈຳນວນຄົນ: **3 ຄົນ**
9. ຫ້ອງການ ແລະ ສາງຢູ່ແຄ້ມແອນດິດ ໃຊ້ຈຳນວນຄົນ **6 ຄົນ**
10. ຫ້ອງການປະຈຳ ເມືອງວຽງທອງ ໃຊ້ຈຳນວນຄົນ: 3 ຄົນ

## II. <u>ໜ້າທີ່ທີ່ຕ້ອງປະຕິບັດ:</u>

ກ. ບໍລິສັດຜູ້ໃຫ້ບໍລິການຈະຕ້ອງຈັດພະນັກງານຮັກສາຄວາມປອດໄພເຂົ້າໄປເບິ່ງແຍງຮັກສາຊັບສິນຂອງຜູ້ໃຊ້ບໍລິການໃນຂອບເຂດພື້ນທີ່ທີ່ບໍລິສັດຜູ້ໃຫ້ບໍລິການຈະຕ້ອງຮັບຜິດຊອບ.

ຂ. ບໍລິສັດຜູ້ໃຫ້ບໍລິການຕ້ອງສະໜອງພະນັກງານຮັກສາຄວາມປອດໄພໃຫ້ຄົບຕາມທີ່ກຳນົດ ພ້ອມດ້ວຍລາຍຊື່ພະນັກງານທັງໝົດ, ຊີວະປະຫວັດ, ພາບຖ່າຍ, ໃບຢັ້ງຢືນຝຶກອົບຮົມ, ໃບແຈ້ງໂທດ ແລະ ໃບກວດສຸຂະພາບ. ພະນັກງານຮັກສາຄວາມປອດໄພຄວນມີຄຸນນະສົມບັດ ດັ່ງລຸ່ມນີ້;

(1) ສັນຊາດລາວ.

(2) ອາຍຸລະຫວ່າງ 18 ປີ ຫາ 55 ປີ ເທົ່ານັ້ນ.

(3) ບໍ່ເຄີຍມີປະຫວັດເຄີຍພົວພັນກ່ຽວກັບຢາເສບຕິດ.

(4) ບໍ່ເຄີຍມີປະຫວັດການກະທຳຄວາມຜິດກ່ຽວກັບຊັບເຊັ່ນ: ລັກຊັບ, ປຸ້ນຊັບ, ຍັກຍອກ, ຍາດຊິງ, ສໍ້ໂກງ ເປັນຕົ້ນ.

(5) ມີສຸຂະພາບຮ່າງກາຍແຂງແຮງ ແລະ ບໍ່ເປັນພະຍາດຕິດຕໍ່.

(6) ຜ່ານການຝຶກອົບຮົມການຮັກສາຄວາມປອດໄພ ຫຼື ມີປະສົບການໃນວຽກງານດັ່ງມາກ່ອນ.

(7) ຕ້ອງມີຄວາມຮູ້ ແລະ ສາມາດສື່ສານພາສາອັງກິດໄດ້ໂດຍພື້ນຖານ (ສະເພາະພະນັກງານຮັກສາຄວາມປອດໄພລະດັບຫົວໜ້າຄວບຄຸມງານ).

ຄ. ບໍລິສັດຜູ້ໃຫ້ບໍລິການຕ້ອງຈັດຕັ້ງລະບຽບການຮັກສາຄວາມປອດໄພເພື່ອໃຫ້ພະນັກງານຮັກສາຄວາມປອດໄພ ຮັບຮູ້ ແລະ ປະຕິບັດໃຫ້ຖືກຕ້ອງໂດຍເຄັ່ງຄັດ ລວມເຖິງ:

(1) ສວມໃສ່ເຄື່ອງແບບຕາມທີ່ກຳນົດຕະຫຼອດໄລຍະເວລາທີ່ປະຕິບັດງານ.

(2) ນຳໃຊ້ອຸປະກອນ ແລະ ເຄື່ອງມື ໃຫ້ຖືກຕ້ອງກົງຕາມມາດຖານຂອງບໍລິສັດຮັກສາຄວາມປອດໄພ, ລວມທັງວິທະຍຸສື່ສານ ແລະ ເຄື່ອງມືເຫຼົ່ານັ້ນຈະຈັດຫາມາໂດຍບໍລິສັດຜູ້ໃຫ້ບໍລິການ.

(3) ພະນັກງານຮັກສາຄວາມໄພບໍ່ຄວນມີສານເຫຼົ້າໃນຮ່າງກາຍໃນເວລາປະຕິບັດໜ້າທີ່ ແລະ/ຫຼື ຫາກພົບວ່າຜູ້ປະຕິບັດງານມີສານເສບຕິດ ຫຼື ໃຊ້ສານເສບໃນໄລຍະປະຕິບັດງານແມ່ນຈະຖືກປະຕິບັດຕາມລະບຽບຂອງໂຄງການ.

(4) ຫ້າມບໍ່ໃຫ້ກໍ່ເຫດທະເລາະວິວາດໃນໄລຍະປະຕິບັດງານ ແລະ ພາຍໃນທີ່ຕັ້ງໂຄງການ.

(5) ຫ້າມຫຼິ້ນໂທລະສັບໃນເວລາປະຕິບັດວຽກ.

(6) ບໍລິສັດຜູ້ໃຫ້ບໍລິການຕ້ອງສະໜອງທີ່ພັກໃຫ້ກັບພະນັກງານຮັກສາຄວາມປອດໄພດ້ວຍຕົນເອງ.

(7) ຕິດຕັ້ງເຄື່ອງອຸປະກອນບັນທຶກເວລາເລາະກວດຍາມຂອງຫົວໜ້າທີມເລາະກວດກາ ລວມທັງໝົດ 8ຈຸດ ຄື: 7ຈຸດຢູ່ໃນແຄ້ມນ້ຳເທີນ1 ແລະ 1 ຈຸດຢູ່ໄມ້ກັນທີ1 ທາງເຂົ້າຫຼັກຂອງໂຄງການ. ຜູ້ໃຫ້ບໍລິການຈະຕ້ອງສະໜອງອຸປະກອນດັ່ງກ່າວເອງ ແລະ ການເລາະກວດກາແມ່ນໃຫ້ຢູ່ໄລຍະທຸກໆ 2 ຊົ່ວໂມງ ທັງກະກາງເວນ ແລະ ກະກາງຄືນ.

(8) ຍານພະຫະນະໃນການເລາະກວດຍາມ ຜູ້ໃຫ້ບໍລິການຮັບຜິດຊອບເອງ.

(9) ຕ້ອງມີກວດຍານພາຫະນະທຸກຄັນ ເຂົ້າ-ອອກ ບໍລິເວນໂຄງການ ຕາມຂັ້ນຕອນຮັກສາຄວາມປອດໄພ.

## III. <u>ສະຖານທີ່ຮັກສາຄວາມປອດໄພຂອງຜູ້ໃຊ້ບໍລິການ ແລະ ໜ້າທີ່ຂອງບໍລິສັດຜູ້ໃຫ້ບໍລິການ:</u>

ຈຳນວນພະນັກງານຮັກສາຄວາມປອດໄພ ແລະ ເວລາປະຕິບັດໜ້າທີ່ ວັນໜຶ່ງ 24 (ຊາວສີ່) ຊົ່ວໂມງ, ແບ່ງອອກເປັນ 03 (ສາມ) ກະຄື:

1. ກະທີ 1: ເລີ່ມແຕ່ເວລາ 08:00ມ - 16:00ມ,

2. ກະທີ 2: ເລີ່ມແຕ່ເວລາ 16:00ມ - 24:00ມ,

3. ກະທີ 3: ເລີ່ມແຕ່ເວລາ 24:00ມ - 08:00ມ

4. ຫົວໜ້າຄຸມງານ 1 (ໜຶ່ງ) ຄົນ ສາມາດເຮັດບົດລາຍງານ ແລະ ສື່ສານກັບຄົນຕ່າງປະເທດເປັນພາສາອັງກິດໄດ້ໂດຍພື້ນຖານ.

**ພະນັກງານທັງໝົດມີ (48) ຄົນ ລວມທັງຫົວໜ້າຄຸມງານ.**

*ໝາຍເຫດ:* ຈໍານວນພະນັກງານຮັກສາຄວາມປອດໄພ ອາດມີການເພີ່ມ ຫຼື ຫຼຸດຂຶ້ນກັບໜ້າທີ່ວຽກຕົວຈິງ ຜູ້ໃຫ້ບໍລິການຈໍາຕ້ອງມີກໍາລັງພົນສໍາຮອງໃນກໍລະນີທີ່ພະນັກງານຂາດວຽກ ຫຼື ລາອອກ.

ຜູ້ໃຊ້ບໍລິການຈະເປັນຜູ້ຕອບສະໜອງຄວາມສະດວກໃຫ້ແກ່ພະນັກງານຮັກສາຄວາມປອດໄພຄື

1. ປ້ອມປະຈໍາການ.
2. ໂຕ໊ະ, ຕັ່ງ, ນໍ້າດື່ມ ແລະໄຟຟ້າແສງສະຫວ່າງ.
3. ຫ້ອງນໍ້າ.

## IV. <u>ໜ້າວຽກ</u>

1. ປະຈໍາຈຸດກວດຫຼັກທາງເຂົ້າ - ອອກໂຄງການ (ໄມ້ກັ້ນທີ 1), ກວດເຊັກຍານພະຫະນະທຸກປະເພດ, ລົດຈັກ ແລະ ບຸກຄົນ ທັງຂາເຂົ້າ ແລະ ຂາອອກ.
2. ຕ້ອງໝັ້ນໃຈວ່າລົດທຸກຄັນທີ່ຜ່ານປະຕູຫຼັກຕ້ອງມີຂໍ້ມູນຂອງປ້າຍອະນຸຍາດທີ່ສະແດງຢູ່ດ້ານໜ້າແວ່ນຂອງລົດ ແລະ ສະຕິກເກີ ຂອງບໍລິສັດທີ່ຕິດໄວ້ດ້ານຂ້າງຂອງປະຕູ.
3. ຈົດບັນທຶກການເຂົ້າ-ອອກທັງໝົດລົງໃນປຶ້ມບັນທຶກຂໍ້ມູນ.
4. ປະສານສົມທົບກັບຕົວແທນຜູ້ໃຊ້ບໍລິການພ້ອມກັນວາງກົດລະບຽບຮ່ວມກັນເພື່ອຕ້ານ ແລະ ສະກັດກັ້ນໃນຂອບເຂດພື້ນທີ່ທີ່ບໍລິສັດຜູ້ໃຫ້ບໍລິການຈະຕ້ອງຮັບຜິດຊອບ ປົກປັກຮັກສາຊັບສິນຂອງຜູ້ໃຊ້ບໍລິການ ແລະ ຂອບເຂດອາຄານສະຖານທີ່ໃຫ້ມີຄວາມປອດໄພຕະຫຼອດເວລາ.
5. ສະກັດກັ້ນຄົນທີ່ບໍ່ກ່ຽວຂ້ອງຈາກພາຍນອກທີ່ຫວັງເຂົ້າໃນຂອບເຂດພື້ນທີ່ໂຄງການໂດຍບໍ່ໄດ້ຮັບອານຸຍາດ ບໍລິສັດຜູ້ໃຫ້ບໍລິການຈະຕ້ອງຮັບຜິດຊອບເຮັດໃຫ້ພື້ນທີ່ໂຄງການມີຄວາມປອດໄພ.
6. ເຮັດບົດລາຍງານການເລາະເວນຍາມປະຈໍາວັນ ແລະ ປະຈໍາເດືອນ ໃຫ້ກັບຜູ້ໃຊ້ບໍລິການ. ໃນກໍລະນີທີ່ມີເຫດການບໍ່ປົກກະຕິເກີດຂຶ້ນ, ບໍລິສັດຜູ້ໃຫ້ບໍລິການຕ້ອງເຮັດບົດລາຍງານຂອງເຫດການດັ່ງກ່າວໃຫ້ຜູ້ໃຊ້ບໍລິການຊາບພາຍໃນ 24 (ຊາວສີ່) ຊົ່ວໂມງ.
7. ເຄື່ອງແບບ ແລະ ອຸປະກອນອື່ນໆທີ່ຮັບໃຊ້ເຂົ້າໃນການເລາະເວນຍາມຍານພາຫະນະໃນການເລາະກວດກາ ແລະ ເຄື່ອງບັນທຶກ Electronic Tracking Machine ເປັນຕົ້ນ.

8. ບໍລິສັດຜູ້ໃຫ້ບໍລິການຕ້ອງຮັບປະກັນໃຫ້ພະນັກງານ ແລະ ຜູ້ຕາງໜ້າຂອງຕົນກວດຂັນ ແລະ ປະຕິບັດຕາມລະບຽບ ແລະ ກົດໝາຍທັງໝົດຂອງ ສປປ ລາວ, ລວມທັງກົດໝາຍທີ່ກ່ຽວກັບແຮງງານ, ການປະກັນສັງຄົມ ແລະ ການປົກປ້ອງພະນັກງານ.

## V. <u>ກຳນົດໄລຍະສັນຍາ</u>

ໄລຍະສັນຍາກຳນົດພາຍໃນ 12 (ສິບສອງ) ເດືອນ, ນັບຕັ້ງແຕ່ມື້ລົງລາຍເຊັນຮ່ວມກັນທັງສອງຝ່າຍ.

## VI. <u>ກຳນົດສົ່ງລາຄາ</u>

ຜູ້ໃຫ້ບໍລິການຕ້ອງສົ່ງລາຄາບໍ່ໃຫ້ເກີນວັນທີ **31 ເດືອນ ກໍລະກົດ 2026** ເວລາ **17:00 ໂມງ**. ຜູ້ໃຫ້ບໍລິການຕ້ອງສົ່ງລາຄາເຂົ້າອີເມວ Procurement.bid@nt1pc.com ເທົ່ານັ້ນສຳລັບສຳເນົາເອກະສານອີເລັກໂທນິກ ແລະ ສະບັບຂອງແທ້ ແມ່ນສົ່ງໂດຍຕົງຫາບໍລິສັດໄຟຟ້ານ້ຳເທີນ 1 ໂດຍລະບຸຄຳວ່າ “ ຊອງປະມູນການບໍລິການຮັກສາຄວາມປອດໄພ ”

**ໝາຍເຫດ:**

ຖ້າຫາກຜູ້ໃຫ້ບໍລິການມີຄວາມສົນໃຈຢາກໄປຢ້ຽມຢາມສະໜາມຕົວຈິງກ່ຽວກັບສະຖານທີ່ ຫຼື ສອບຖາມຂໍ້ມູນເພີ່ມເຕີມ ກະລຸນາຕິດຕໍ່:

ທ່ານ ເພັດພູທອນ ພົມມະວົງ ຫົວໜ້າ ບໍລິຫານພາກສະໜາມ +856 20 52 898 721

ທ່ານ ສິດທິສັກ ວົງຄຳແຫງ ບໍລິຫານພາກສະໜາມ +856 20 22234040

ທ່ານ ນາງ ລັດດາ ຈັດຊື້ອາວຸໂສ +856 20 54 201 221

## ຂອບເຂດພື້ນທີ່ທີ່ບໍລິສັດຜູ້ໃຫ້ບໍລິການຈະຕ້ອງຮັບຜິດຊອບ

## ແຜນທີ່ໂດຍລວມຂອງໂຄງການ



Sithong Road, Pakthang Village, Sikhotabong District, Vientiane Capital
Tel: (856)021 550497, Fax: (856) 021 550498,
E-mail: Info@nt1pc.com

NAMTHEUN1





**Nam Theun 1 Power Co., Ltd (NT1PC)**
Sithong Road, Pakthang Village, Sikhotabong District, Vientiane Capital
Tel: (856)021 550497, Fax: (856) 021 550498,
E-mail: Info@nt1pc.com






Nonesavanh
Connection Switch
Yard NT1 HPP
13